# ບົດປະເມີນຜົນກະທົບ ເບື້ອງຕົ້ນ

# PRELIMIARY IMPACT ASSESSMET (PIA)

## ການປັບປຸງການແຈ້ງຂຶ້ນທະບຽນວິສາຫະກິດ **ບົດສະຫຼຸບ ແລະ ຜົນ**ຕອບຮັບຂອງການສະເໜີ

ບົດສຶກສາຜົນກະທົບເບື້ອງຕົ້ນ PRELIMIARY IMPACT ASSESSMET (PIA) ທີ່ຄັດຕິດມາພ້ອມນີ້ ແມ່ນກະກຽມໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ (ທຄວ), ກະຊວງອຸດສາຫະກຳ ແລະ ການຄ້າ.

ຍ້ອນການຊີ້ນຳຂອງລັດຖະບານ ແລະ ສະພາແຫ່ງຊາດ ໃຫ້ມີການປັບປຸງກົດໝາຍວ່າດ້ວຍວິສາຫະກິດ ຢ່າງຮີບດ່ວນ. ຈື່ງເຮັດໃຫ້ບໍ່ສາມາດຮັບຮອງກ່ຽວກັບການເຮັດການຄົ້ນຄວ້າ ແລະ ວິເຄາະໄດ້ທັງໝົດ ຫຼື ບໍ່ສາມາດເຮັດໃຫ້ສຳເລັດບາງພາກ ຂອງ ການປະເມີນຜົນກະທົບເບື້ອງຕົ້ນ Preliminary Impact Assessment (PIA).

ບົດສຶກສາຜົນກະທົບເບື້ອງຕົ້ນ (PIA) ນີ້ບໍ່ແມ່ນການຕັດສິນໃຈ ຫຼື ຄວາມຕ້ອງການທີ່ຈະດຳເນີນການ ໃດໆ. ຈຸດປະສົງເພື່ອການປຶກສາຫາລື ແລະ ຊອກຫາຜົນການຕອບຮັບ ກ່ຽວກັບບັນຫາ ລວມທັງ ບັນດາທາງເລືອກຕ່າງໆ ທີ່ຈະເຮັດໃຫ້ການຂຶ້ນທະບຽນ ວິສາຫະກິດງ່າຍດາຍ ເພື່ອນຳສະເໜີໃຫ້ລັດຖະບານພິຈາລະນາ.

### ຂໍ້ມູນພື້ນຖານ

ລັດຖະບານ ສປປ ລາວ ແມ່ນຢູ່ໃນໄລຍະຈັດຕັ້ງປະຕິບັດຂັ້ນຕອນ ການປະເມີນຜົນກະທົບຂອງນິຕິກຳ (RIA) ທົ່ວຂະແໜງ ການຕ່າງໆ ໂດຍໄດ້ຮັບການຊ່ວຍເຫຼືອຈາກທະນາຄານພັດທະນາອາຊີ (ADB) .

ຂັ້ນຕອນການປະເມີນຜົນກະທົບຕໍ່ລະບຽບກົດໝາຍ ແມ່ນສຸມໃສ່ການຊ່ວຍເຫຼືອໃນການປັບປຸງຄຸນະພາບ ຂອງລະບຽບການ ແລະ ຂັ້ນຕອນຕ່າງໆ ແລະ ຫຼຸດຜ່ອນ/ປ້ອງກັນ ອຸປະສັກ ຂໍ້ຫຍຸ້ງຍາກທາງດ້ານເອກະສານ ທີ່ສ້າງຄວາມລຳຄານໃຫ້ແກ່ ທຸລະກິດລາວ ແລະ ລັດຖະບານ ສປປ ລາວ ຈາກຄວາມຮຽກຮ້ອງທີ່ບໍ່ຕ້ອງການ. RIA ຈະຊ່ວຍສະໜັບສະໜູນໃນການປັບປຸງທາງດ້ານຕົ້ນທຶນໃນການເຮັດທຸລະກິດ ແລະ ຄວາມໄດ້ປຽບໃນການແຂ່ງຂັນຂອງທຸລະກິດລາວ, ໂດຍສະເພາະສະມາຊິກ ອົງການການຄ້າໂລກ ແລະ ການເຂົ້າສູ່ປະຊາຄົມເສດຖະກິດອາຊຽນໃນປີ 2015.

ການກະກຽມ PIA ແມ່ນຂັ້ນຕອນສຳຄັນໃນຂະບວນການດັ່ງກ່າວ.

### ບັນຫາຕ່າງໆໃນການກະກຽມ PIA

ບັນດາຄຳເຫັນຂອງທຸລະກິດລາວ ແລະ ພະນັກງານລັດ, ແລະ ຂໍ້ມູນໃນປີ 2014 ຄວາມສະດວກໃນການສ້າງຕັ້ງທຸລະກິດ ສຶກສາໂດຍ ອົງການ ການເງິນ ສາກົນ/ທະນາຄານໂລກ (IFC/World Bank), ໄດ້ສະແດງໃຫ້ເຫັນຄວາມບໍ່ຊັດເຈນ ກ່ຽວກັບຂັ້ນຕອນ ແລະ ຄວາມຮຽກຮອ້ງຕ້ອງການໃນການແຈ້ງຂຶ້ນທະບຽນ ວິສາຫະກິດ, ໃຊ້ເວລາດົນ ແລະ ຫຍຸ້ງຍາກໃນຂັ້ນຕ໊ອນການແຈ້ງຂຶ້ນທະບຽນໂດຍລວມ. ຍ້ອນວ່າ ໃນການຄົ້ນຄວ້າ ແລະ ອະນຸຍາດ ແມ່ນຍັງພົວພັນກັບຫຼາຍຂະແໜງການ.

ຕົວຢ່າງ, ໂດຍສະເລ່ຍແມ່ນໃຊ້ເວລາ 5 ວັນ ແລະ ຄ່າໃຊ້ຈ່າຍ 380,000 ກີບ ສຳລັບ ໃບທະບຽນວິສາຫະກິດ, 10 ວັນ ແລະ ຄ່າໃຊ້ຈ່າຍ 125,000 ກີບ ສຳລັບເລກລະຫັດປະຈຳຕົວຜູ້ເສຍອາກອນ, 45 ວັນ ແລະ ຄ່າໃຊ້ຈ່າຍ 120,000 ກີບ

ສຳລັບກາປະທັບ, ລວມທັງໝົດ 60 ວັນ (12 ອາທິດ) ແລະ ຄ່າໃຊ້ຈ່າຍ 625,000 ກີບ (ອີງການການເງິນສາກົນ/ທະນາຄານໂລກ).

ນອກຈາກນັ້ນ ອີງຕາມຄວາມເຫັນຂອງບັນດາຫົວໜ່ວຍທຸລະກິດ ແລະ ເຈົ້າໜ້າທີ່ຂອງລັດ ຍັງເຫັນວ່າມີຄວາມຫຍຸ້ງຍາກ ແລະ ມີຄວາມສ່ຽງ ໃນການປ່ຽນບາງຮູບແບບວິສາຫະກິດ ຈາກຄວາມຮັບຜິດຊອບໜີ້ສິນໂດຍບໍ່ຈຳກັດ ມາເປັນຄວາມຮັບຜິດຊອບໜີ້ສິນຈຳກັດ ແລະ ຍັງບໍ່ມີຄວາມຊັດເຈນ ຈາກ ມາດຕະຖານ/ ຄວາມຕ້ອງການ ຂອງພາກສ່ວນກ່ຽວຂ້ອງກ່ອນການເລີ່ມຕົ້ນດຳເນີນທຸລະກິດ.

ການປະເມີນ

ອີງໃສ່ຜົນການຕອບຮັບເບື້ອງຕົ້ນ, ພະນັກງານກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ໄດ້ດຳເນີນການປະເມີນບັນຫາ ແລະ ທາງເລືອກ ເພື່ອປັບປຸງຂັ້ນຕອນຕ່າງໆ ໃນການແຈ້ງຂຶ້ນທະບຽນວິສາຫະກິດຢູ່ ສປປ ລາວ ມີຄວາມງ່າຍດາຍຂຶ້ນ:

- ພິຈາລະນາ ການປັບປຸງ ກ່ຽວກັບລະບຽບການ ແລະ ການຈັດຕັ້ງປະຕິບັດ ຂອງ ສປປ ລາວ ປະຈຸບັນ
- ພ້ອມທັງ ວິທີການແກ້ໄຂທີ່ບໍ່ສອດຄ່ອງ/ ຫຼື ກ່ຽວກັບລະບຽບການບາງສ່ວນ.
- ປະເມີນຜົນກະທົບຂອງທາງເລືອກຕ່າງໆ.
- ລະບຸຂໍ້ສະເໜີແນະນຳຕ່າງໆ ໂດຍອີງໃສ່ທາງເລືອກຕ່າງໆເຫຼົ່ານັ້ນ ທີ່ເປັນການສ້າງຄວາມຈະແຈ້ງ ແລະ ຂັ້ນຕອນການແຈ້ງຂຶ້ນທະບຽນ ວິສາຫະກິດ ເພື່ອເປັນການ ຫຼຸດຜ່ອນຄ່າໃຊ້ຈ່າຍ ໃນການປະຕິບັດຕາມລະບຽບການ ແລະ ຄ່າໃຊ້ຈ່າຍໃນການຄຸ້ມຄອງບໍລິຫານ.

ຂໍ້ສະເໜີ

ຂໍ້ສະເໜີແນະນຳຕ່າງໆ ເພື່ອປັບປຸງ ຂັ້ນຕອນການແຈ້ງຂຶ້ນທະບຽນວິສາຫະກິດໃຫ້ດີຂຶ້ນ:

1. ກຳນົດຢ່າງຈະແຈ້ງວ່າຕາປະທັບແມ່ນອອກໂດຍກະຊວງປ້ອງກັນຄວາມສະຫງົບ ແລະ ຄວັດຕາປະທັບ ພາຍໃນ 5 ວັນລັດຖະການ;
2. ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ສະເໜີຂໍເລກປະຈຳຕົວຜູ້ເສຍອາກອນຈາກ ກະຊວງ ການເງິນ ໃນເວລາທີ່ ເອກະສານ ການຂຶ້ນທະບຽນ ວິສາຫະກິດ ໄດ້ຍື່ນແລ້ວ ແລະ ກະຊວງ ການເງິນ ສົ່ງເລກປະຈຳຕົວຜູ້ເສຍອາກອນ ມາໃຫ້ ກົມທະບຽນ ແລະ ຄຸ້ມຄອງ ວິສາຫະກິດ ເພື່ອອອກເລກປະຈຳຕົວຜູ້ເສຍອາກອນ ລວມເຂົ້າກັນກັບ ໃບທະບຽນວິສາຫະກິດ.
3. ການອອກໃບທະບຽນ ວິສາຫະກິດ ທີ່ຕ້ອງຜ່ານການຂໍອະນຸຍາດຈາກ ບັນດາກະຊວງທີ່ກ່ຽວຂ້ອງ, ຊຶ່ງ ບັນດາກະຊວງນັ້ນຕ້ອງສະໜອງຂໍ້ມູນທີ່ຈຳເປັນ ແລະ ຕ້ອງການຕ່າງໆທີ່ ກ່ຽວກັບ ການອະນຸຍາດ ໃຫ້ກະຊວງ ອຄ ເພື່ອແຈ້ງການ-ເຜີຍແຜ່ ຢ່າງທົ່ວເຖິງ
4. ສ້າງຄວາມຈະແຈ້ງກ່ຽວກັບບາງທຸລະກິດມີການຍົກເວັ້ນ ຫຼື ບໍ່ຈຳເປັນຕ້ອງ ແຈ້ງຂຶ້ນທະບຽນວິສາຫະກິດຢູ່ທີ່ກະຊວງ ອຄ ແລະ ລະບຸສະເພາະ ບັນດາທຸລະກິດນັ້ນ ໃສ່ໃນລະບຽບການຕ່າງຫາກ
5. ກຳນົດຈະແຈ້ງໃນ ກົດໝາຍວ່າດ້ວຍວິສາຫະກິດ ວ່າທຸລະກິດຕ່າງໆຕ້ອງໄດ້ຜ່ານ ການກວດສອບ ມາດຕະຖານ/ ຄວາມຕ້ອງການ ຂອງຂະແໜງການທີ່ກ່ຽວຂ້ອງ (ຕາມທີ່ໄດ້ກຳນົດໃນກົດໝາຍທີ່ກ່ຽວຂ້ອງ) ກ່ອນຈະເລີ່ມດຳເນີນທຸລະກິດ.

6. ອະນຸຍາດໃຫ້ວິສາຫະກິດປ່ຽນຮູບແບບ ຫຼື ຮູບການ ຈາກຄວາມຮັບຜິດຊອບໜີ້ສິນບໍ່ຈຳກັດມາເປັນຄວາມຮັບຜິດຊອບໜີ້ສິນຈຳກັດ ແຕ່ຕ້ອງຢູ່ໃນກໍລະນີທີໄດ້ຊຳລະສະສາງໜີ້ສິນຄົບຖ້ວນກ່ອນ.

ຜົນໄດ້ຮັບ

ອີງຕາມການຕີລາຄາ, ເຫັນວ່າຂໍ້ແນະນຳຂ້າງເທິງຈະຊ່ວຍຫຼຸດຜ່ອນເວລາໃນການໄດ້ຮັບໃບທະບຽນວິສາຫະກິດ, ເລກປະຈຳຕົວຜູ້ເສຍອາກອນ ແລະ ກາປະທັບ ສະເລ່ຍແຕ່ 10-15 ວັນ, ປະຢັດເວລາ ແລະ ຄ່າໃຊ້ຈ່າຍ ໃຫ້ແກ່ນັກລົງທຶນໃນການເລີ່ມຕົ້ນທຸລະກິດ. ຂໍ້ແນະນຳຂ້າງເທິງຍັງຈະເປັນຈະເປັນຂໍ້ມູນທີ່ດີ ໃຫ້ແກ່ຜູ້ລົງທຶນ ແລະ ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ ເຮັດໃຫ້ກົດໝາຍວ່າດ້ວຍວິສາຫະກິດມີຄວາມ ຈະແຈ້ງ ແລະ ງ່າຍດາຍຂຶ້ນ.

**ຜົນ**ການຕອບຮັບ

ຈາກພາກສ່ວນ ເອກະຊົນ

1. ທ່ານເຫັນດີກ່ຽວກັບ ບັນຫາການຂຶ້ນທະບຽນວິສາຫະກິດ ຫຼືບໍ່? ແລະ ຍັງມີບັນຫາອື່ນຕື່ມ ຫຼືບໍ່?
2. ໂດຍສະເລ່ຍ, ໃຊ້ເວລາ ແລະ ລາຄາ ເທົ່າໃດໃນການ ກະກຽມ ແລະ ຍື່ນເອກະສານຄຳຮ້ອງ ສຳຫຼັບ ການຂຶ້ນທະບຽນ ວິສາຫະກິດ? ປົກກະຕິ ມີເອກະສານຫຼາຍປານໃດ? ໃຊ້ເວລາດົນປານໃດໃນການທີ່ຈະໄດ້ຮັບ ໃບທະບຽນ ຫຼັງຈາກມື້ສົ່ງຄຳຮ້ອງ?
3. ໂດຍສະເລ່ຍ, ໃຊ້ເວລາ ແລະ ລາຄາ ເທົ່າໃດໃນການ ກະກຽມ ແລະ ຍື່ນເອກະສານຄຳຮ້ອງ ສຳລັບ ເລກລະຫັດປະຈຳຕົວຜູ້ເສຍອາກອນ? ປົກກະຕິ ມີເອກະສານຫຼາຍປານໃດ? ໃຊ້ເວລາດົນປານໃດໃນການທີ່ຈະໄດ້ຮັບເລກທະບຽນຜູ່ເສຍອາກອນ? ຫຼັງຈາກມື້ສົ່ງຄຳຮ້ອງ?
4. ໂດຍສະເລ່ຍ, ໃຊ້ເວລາ ແລະ ລາຄາ ເທົ່າໃດໃນການ ກະກຽມ ແລະ ຍື່ນເອກະສານຄຳຮ້ອງ ສຳຫຼັບ ຕາປະທັບ? ປົກກະຕິ ມີເອກະສານຫຼາຍປານໃດ? ໃຊ້ເວລາດົນປານໃດໃນການທີ່ຈະໄດ້ຮັບ ຕາປະທັບ ຫຼັງຈາກມື້ສົ່ງຄຳຮ້ອງ?
5. ຕາປະທັບແມ່ນມີຄວາມຈຳເປັນຫຼືບໍ່ ຕໍ່ກັບການດຳເນີນທຸລະກິດ? ຄວນຈະເປັນທາງເລືອກໃຫ້ ມີ ຫຼື ບໍ່ມີ ໄດ້ບໍ່?
6. ທ່ານ ເຫັນດີ ແລະ ສະໜັບ ສະໜູນ ຕໍ່ການນຳສະເໜີ ເລື່ອງການສ້າງຄວາມຈະແຈ້ງ ແລະ ສ້າງຄວາມສະດວກສະບາຍຂຶ້ນ ແລະ ລົດຄ່າໃຊ້ຈ່າຍ ສຳລັບຂະບວນການ ການຂຶ້ນທະບຽນວິສາຫະກິດ ບໍ?
7. ທ່ານຄິດວ່າຍັງມີທາງເລືອກໃດອີກບໍ່ ທີ່ຄວນຄົ້ນຄວ້າ ສຳລັບການ ສ້າງຄວາມ ຈະແຈ້ງ/ສ້າງຄວາມສະດວກສະບາຍ ຕໍ່ຂະບວນການ ການຂຶ້ນທະບຽນ ວິສາຫະກິດ

ຈາກພາກສ່ວນ ສະມາຊິກ ຂອງ ພັກລັດ ແລະ ສັງຄົມ

1. ທ່ານເຫັນດີ ແລະ ສະໜັບ ສະໜູນ ຕໍ່ການ ສ້າງຄວາມຈະແຈ້ງ ແລະ ຄຳແນະນຳ ທີ່ຖືກນຳສະເໜີ ຫຼືບໍ່? ກະລຸນາອະທິບາຍ
2. ທ່ານຍັງເຫັນວ່າຍັງມີບາງບັນຫາ ແລະ ທາງເລືອກທີ່ເປັນໄປໄດ້ ໃນການສ້າງຄວາມຈະແຈ້ງ ຕໍ່ບັນຫາຂັ້ນຕອນການແຈ້ງຂຶ້ນທະບຽນວິສາຫະກິດ ຫຼືບໍ່?

ກະລຸນາ ສະໜອງຂໍ້ມູນ ກ່ອນວັນສຸກ ທີ 23 ພຶດສະພາ 2014. ເມື່ອເວລາສະໜອງຂໍ້ມູນແລ້ວກະລຸນາ ແຈ້ງຊື່ ແລະ ຂໍ້ມູນໃນການຕິດຕໍ່ກັບ (ລວມທັງ ຊື່ຂອງອົງກອນທີ່ທ່ານສັງກັດຢູ່ ໃນກໍລະນີທີ່ສາມາດນຳໃຊ້ໄດ້)

ສາມາດສົ່ງການຕອບຮັບ ໃຫ້ແກ່:

ທ່ານ ສຸລິຄຳ ແຈ້ງສະຫວ່າງ ໂທ ( 856 ) 20 5699 1177 E mail : kongslk@yahoo.com
ທ່ານ ວັນມີໄຊ ດວງພະຈັນ ໂທ : (856) 20 2246 5252 E mail : vanhtous@yahoo.com

ຫຼື ສະເໜີຕໍ່: ກະຊວງ ອຸດສາຫະກຳ ແລະ ການຄ້າ
ກົມ ທະບຽນ ແລະ ຄຸ້ມຄອງວິສາຫະກິດ
ຕູ້ໄປສະນີ: 4107
ນະຄອນຫຼວງ ວຽງຈັນ, ສປປ ລາວ